# ບົດຮຽນໂຮງຮຽນວັນອາທິດ
## ວັນອາທິດ ທີ 16 ມີນາ 2007 (03-16-08)

## ມີຊີວິດຢູ່ໃນ 3:16- ທັງໝົດແມ່ນເລື່ອງຄວາມຮັກ:

**ຂໍ້ພຣະຄັມພີໃນບົດຮຽນ:** ໂຢຮັນ 3:16; 1 ໂຢຮັນ 3:16-20; 4:15-18; 5:2-5

**ຄຳຖາມຊີວິດ:** ພຣະເຈົ້າມີພຣະປະສົງໃຫ້ຂ້າພະເຈົ້າຮັກຄົນອື່ນໆຢ່າງໃດ?

**ພຣະຄັມພີແຫ່ງຄວາມຈິງ:** ພຣະເຈົ້າຮັກທຸກໆຄົນເພາະນັ້ນເປັນລັກສະນະຂອງພຣະອົງຄືໃຫ້ຮັກ, ແລະພຣະອົງມີພຣະປະສົງໃຫ້ຄົນທີ່ຮູ້ຈັກພຣະອົງທາງຄວາມເຊື່ອນັ້ນ ສະແດງຄວາມຮັກຕໍ່ຄົນອື່ນຢ່າງເສັງສະລະແທ້.

**ຜົນສະທ້ອນຕໍ່ຊີວິດ:** ບົດຮຽນນີ້ໄດ້ຂຽນຂຶ້ນມາເພື່ອຈະຊ່ອຍໃຫ້ທ່ານມີຊີວິດປະຈຳວັນດ້ວຍຄວາມໝັ້ນໃຈ ແລະຫວັງວ່າເປັນດັ່ງນີ້:

- ເຂົ້າໃຈເຖິງຄວາມກ້າຫານ, ສິ່ງທີ່ພຣະເຈົ້າປະທານຄວາມຮັກໃຫ້ຕາມທຳມະຊາດຂອງພຣະເຈົ້າ;
- ຮູ້ເຖິງວິທີທາງທີ່ທ່ານມີຄວາມສາມາດສະແດງຄວາມຮັກຕໍ່ຄົນອື່ນຢ່າງເສັງສະລະແທ້.

"ສິ່ງທີ່ທ່ານຕ້ອງການຫລາຍກ່ອນໝູ່ແມ່ນຄວາມຮັກ." "ຄວາມຮັກ ແລະຄວາມຫວານຊື່ນແມ່ນສິ່ງທີ່ໂລກມະນຸດຕ້ອງການ." "ເອົາຄວາມຮັກໄວ້ໃນໃຈຂອງທ່ານ." ມີນັກຂຽນເພງໃນທຸກໆສມັຍ ສ່ວນຫລາຍແມ່ນເວົ້າເຖິງຄວາມຮັກທັງນັ້ນ. ໂດຍສະເພາະເພງທັນສມັຍເວລາເຂົາເວົ້າເຖິງຄວາມຮັກແມ່ນເຂົາໝາຍເຖິງກິເລດຕັນຫາ, ການເປັນເຈົ້າຂອງຄົນ, ຫລືຄວາມ ອິດສາເປັນສ່ວນໃຫຍ່-ສິ່ງເຫລົ່ານີ້ແມ່ນເວົ້າເຖິງສິ່ງກົງກັນຂ້າມເຖິງຄວາມຮັກ. ເພງສມັຍໃໝ່ໄດ້ເວົ້າວ່າ ຄວາມຮັກໄດ້ມາ ງ່າຍໆ ຫລືສິ່ງທີ່ຕ້ອງການແມ່ນຄວາມຮັກ; ສິ່ງນີ້ກໍບໍ່ແມ່ນໄກໄປຈາກຄວາມຈິງ. ການເປັນຄົນທີ່ມີຄວາມຮັກນັ້ນມັນເປັນການ ຍາກເຫລືອເກີນ ຈະເປັນຄົນຮັກຕໍ່ພຣະເຈົ້າ, ຕໍ່ຄົນທີ່ມີຄວາມເຊື່ອຢ່າງດຽວກັນ ຫລືຕໍ່ສັດຕຣູ. ທຸກໆຄົນເຮົາຕ້ອງຮຽນຮູ້ເຖິງ ຄວາມຮັກ, ສິ່ງດີທີ່ສຸດທີ່ຈະຮຽນນັ້ນແມ່ນການເຂົ້າໃຈເຖິງຄວາມຮັກຕໍ່ພຣະເຈົ້າ, ຜູ້ທີ່ ເປັນກົກເຄົ້າແຫ່ງຄວາມຮັກ. ວິທີໃດ ທີ່ຈະຮູ້ເຖິງຄວາມຮັກຂອງພຣະເຈົ້າ? ວິທີທາງໃດທີ່ຈະສະແດງຄວາມຮັກ ຕໍ່ຄົນອື່ນ? ໃຫ້ພວກເຮົາສຶກສາໃນພຣະຄັມພີເພື່ອ ຊອກຫາຄຳຕອບ.

## ສຶກສາພຣະຄັມພີ

### 1. ພຣະເຈົ້າຊົງຮັກທ່ານ (ໂຢຮັນ 3:16)

ໂຢຮັນ 3:16 ອາດເປັນຂໍ້ທີ່ຄົນສ່ວນຫລາຍຮູ້ຈັກດີຢູ່ໃນພຣະຄັມພີ. ອີງຕາມຄະນະແປພຣະຄັມພີໃນປະເທດອະເມຣິກາໄດ້ ລາຍງານວ່າພວກເພິ່ນໄດ້ແປພຣະຄຳພີເປັນພາສາຕ່າງໆຫລາຍກວ່າ 1573. ຄວາມຮັກແລະຂອງພຣະຣາຊທານເຣື່ອງຄວາມ ພົ້ນດ້ວຍພຣະເຢຊູເປັນຄວາມຈິງສອງຢ່າງໃນພຣະຄັມພີ.

ຂໍ້ຄວາມສຳຄັນໃນໂຢຮັນ 3:16 ແມ່ນການສົນທະນາລະຫວ່າງອົງພຣະເຢຊູກັບ ຫົວໜ້າສາສນາຜູ້ມີຊື່ວ່າ ນີໂກເດມເວົ້າ ເຣື່ອງການເກີດໃໝ່. ພຣະເຢຊູໄດ້ບອກໃຫ້ນີໂກເດມ ບັງເກີດໃໝ່ (ຈາກທາງເທິງ) ເພື່ອຈະເຂົ້າໃນຣາຊອານາ

ຈັກຂອງພຣະ ເຈົ້າໄດ້. ແຕ່ວ່າທ່ານ ນີໂກເດມບໍ່ເຂົ້າໃຈເຖິງຄວາມໝາຍທີ່ອົງພຣະເຢຊູໄດ້ກ່າວນັ້ນເລີຍ. ໃນທີ່ສຸດ ອົງພຣະເຢຊູໄດ້ອະທິບາຍວ່າເຣື່ອງບັງເກີດໃໝ່ນັ້ນເປັນພາຣະກິດຂອງອົງພຣະວິນຍານບໍຣິສຸດ, ອົງພຣະວິນຍານນັ້ນ ແມ່ນຜູ້ທີ່ກະທຳການໃນຊີວິດຂອງແຕ່ລະຄົນ ເພື່ອພວກເຂົາຈະໄດ້ບັງເກີດໃໝ່ຮັບເອົາຄວາມພົ້ນຈາກຄວາມຜິດບາບ. (ໂຢຮັນ 3:1-8)

ໂຢຮັນ 3:16 ໄດ້ເປີດເຜີຍໃຫ້ເຮົາໄດ້ຮູ້ຄວາມຈິງຢ່າງນ້ອຍສາມຢ່າງເຣື່ອງຂ່າວປະເສີດ: (1) ພຣະເຈົ້າຊົງຮັກພວກ ເຮົາ; (2) ພຣະເຈົ້າປະທານພຣະບຸດອົງດຽວຂອງພຣະອົງເພື່ອເຮົາ; (3) ໃຜກໍຕາມທີ່ເຊື່ອໃນພຣະອົງຈະໄດ້ຊີວິດຮັນຕລອດໄປເປັນນິດ. ຄຳເວົ້າ **ເພື່ອ** ເປັນຄຳທີ່ໃຊ້ໃນຂໍ້ 14-15 ຊຶ່ງໄດ້ຖືກໂຍກຂຶ້ນ ແລະໄດ້ຈັດຫາໃຫ້ຊີວິອັນຖາວອນ ແກ່ຜູ້ທີ່ເຊື່ອ. **ພຣະເຈົ້າ ໄດ້ຊົງຮັກໂລກ** ນັ້ນແມ່ນຄວາມຮັກຂອງພຣະອົງທີ່ໄດ້ຕັ້ງພຣະທັຍໄວ້ແລ້ວ ເພື່ອພຣະອົງຈະໄດ້ສົ່ງພຣະບຸດລົງມາຕາຍແທນ ພວກເຮົາເທິງໄມ້ກາງແຂນ, ຊຶ່ງເປັນການນຳເອົາຄວາມຄວາມພົ້ນມາສູ່ມະນຸດທັງປວງຜູ້ ທີ່ໄວ້ວາງໃຈໃນພຣະເຢຊູເຈົ້າ. ຄຳ ເວົ້າທີ່ວ່າ**ໂລກ** ບໍ່ແມ່ນພຽງແຕ່ພວກອິສຣາເອນ ຜູ້ທີ່ພຣະອົງໄດ້ເລືອກໄວ້ເທົ່ານັ້ນ. ໂຢຮັນ 3:16 ໄດ້ບອກວ່າພຣະເຈົ້າຊົງໄດ້ ຮັກທຸກໆຄົນທຸກຊາດທຸກພາສາໃນໂລກນີ້.

ພຣະເຈົ້າໄດ້ສະແດງຄວາມຮັກຂອງພຣະອົງຕໍ່ມະນຸດໃນການສະລະຊີດວິດຢ່າງແທ້ຈິງຊຶ່ງເປັນການອັສຈັດຢ່າງໃຫຍ່. ໃນການສະລະພຣະບຸດ ພຣະເຈົ້າພຣະບິດາໄດ້ຍອມສະຖວາຍຕົນເອງ ເພື່ອຈະໄດ້ສະແດງເຖິງການເປັນອັນນຶ່ງອັນດຽວລະຫວ່າງ ພຣະບິດາ ແລະພຣະບຸດ.

**ໃນວິທີທາງນີ້** ໄດ້ແປຈາກພາສາກຣີກ ທີ່ໃຊ້ເປັນຄຳຊ່ວຍຄຳເວົ້າທີ່ເປັນຄຳກີຣິຍາຊຶ່ງແປວ່າ ໃນເຣື່ອງນີ້-ຊຶ່ງໄດ້ບອກວ່າ ທາງທີ່ພຣະເຈົ້າໄດ້ຮັກພວກເຮົາ. **ໃນວິທີທາງນີ້** ປະໂຍກຕໍ່ມາໄດ້ອະທິບາຍເຖິງເຣື່ອງພຣະເຈົ້າສະແດງຄວາມຮັກຂອງພຣະອົງຕໍ່ໂລກນີ້: **ພຣະອົງໄດ້ປະທານພຣະບຸດອົງດຽວ**. ສິ່ງວັດແທກຄວາມຮັກຂອງພຣະເຈົ້າແມ່ນການທີ່ພຣະອົງໄດ້ຍອມໃຫ້ ພຣະບຸດອົງດຽວກາຍເປັນຄ່າໄຖ່ຄວາມຜິດບາບຂອງໂລກ, ຄ່າໄຖ່ຂອງຄວາມບາບນັ້ນແມ່ນພຣະບຸດອົງດຽວຂອງພຣະອົງ ເຈົ້າຊຶ່ງເປັນຄ່າແພງທີ່ສຸດສຳລັບພຣະເຈົ້າ.

ຄຳເວົ້າ **ອົງດຽວ** ໄດ້ເໜັ້ນເຖິງຄວາມສເມີພາບກັນຂອງພຣະເຢຊູກັບພຣະບິດາ (ໂຢຮັນ 1:1-2). ເປັນຜູ້ຢູ່ໃກ້ຊິດຕິດແທດກັບພຣະບິດາເຈົ້າ (14, 18). ພຣະເຈົ້າພຣະບິດາໄດ້ຍອມສະລະພຣະບຸດ. ພຣະອົງໄດ້ຍອມສະລະພຣະຊົນ **ເພື່ອຈະປະທານ ຄວາມພົ້ນແກ່ທຸກໆຄົນທີ່ໄດ້ເຊື່ອໃນພຣະເຢຊູ ແລະຈະບໍ່ໄດ້ພົບກັບຄວາມຈິບຫາຍ**ໃນໝົ້ນະຣົກ **ແຕ່ໄດ້ຊີວິດອັນຕລອດໄປເປັນ ນິດ**ໃນເມືອງຟ້າສວັນ ຢູ່ກັບພຣະບິດາເຈົ້າ ແລະອົງພຣະບຸດເໝືອນກັນ. ພຣະບິດາໄດ້ປະທານຄວາມ ພົ້ນດ້ວຍຄວາມເຊື່ອ ຜ່ານທາງອົງພຣະບຸດຂອງພຣະອົງ (14:6); ຜູ້ທີ່ເຊື່ອຄວນຂອບຄຸນພຣະເຈົ້າທີ່ໄດ້ມີຊີວິດໃໝ່ໃນ ທາງອົງພຣະເຢຊູ.

## 2. ຄວາມຮັກຂອງພຣະເຈົ້າຢູ່ໃນຕົວທ່ານ (1 ໂຢຮັນ 3:16-20)

ຜູ້ຂຽນປຶ້ມໂຢຮັນ ທີ 1 ນີ້ກໍແມ່ນຜູ້ດຽວກັນທີ່ຂຽນປຶ້ມຂ່າວປະເສີດໂຢຮັນ. ໃນໂຢຮັນ 3:16 ໄດ້ບອກວ່າພຣະເຈົ້າພຣະບິ ດາໄດ້ຮັກພວກເຮົາ ແລະສະແດງເຖິງຄວາມຮັກນັ້ນໂດຍຍອມສະລະພຣະບຸດອົງດຽວຂອງພຣະອົງ ເພື່ອພວກເຮົາຈະໄດ້ຮັບຄວາມພົ້ນດ້ວຍພຣະບຸດນັ້ນ. ຄ້າຍຄຽງກັນໃນ 1 ໂຢຮັນ 3:16 ໄດ້ເປີດເຜີຍຄວາມຈິງທີ່ຊ່ອຍໃຫ້ພວກເຮົາ**ຮູ້ຈັກຄວາມຮັກອັນບໍຣິສຸດຂອງພຣະເຈົ້າ.** ພຣະເຈົ້າພຣະບຸດໄດ້ຍອມຖວາຍພຣະຊົນຂອງພຣະອົງເພື່ອພວກເຮົາ. ຄວາມພົ້ນຈາກຄວາມບາບນັ້ນເປັນແຜນການຈາກຈິດໃຈຂອງພຣະເຈົ້າໂດຍຕົງ. ໃນເມື່ອອົງພຣະເຢຊູໄດ້ສະລະເພື່ອເປັນຕົວຢ່າງຕໍ່ພວກເຮົາ ເພື່ອໃຫ້ເຮົາປະຕິບັດຕໍ່ຄົນອື່ນໆ: **ພວກເຮົາຄວນສະລະຊີວິດເພື່ອອ້າຍນ້ອງຂອງເຮົາ.** ພຣະເຢ ຊູ ໄດ້ບອກສາວົກກ່ອນແລ້ວວ່າ, "ບໍ່ມີຜູ້ໃດມີຄວາມຮັກໃຫຍ່ກວ່ານີ້ ຄືການທີ່ຜູ້ນຶ່ງຈະໄດ້ສະລະຊີວິດຕາງມິດສະຫາຍຂອງຕົນ." (ໂຢຮັນ 15:13).

ອົງພຣະເຢຊູໄດ້ສະລະພຣະຊົນເພື່ອໂລກນີ້ ແລະພວກເຮົາຄວນເອົາຕົວຢ່າງນັ້ນມາປະກອບໃຊ້ໃນຊີວິດປະຈຳວັນຂອງພວກເຮົາ, ແຕ່ຢ່າງໃດກໍຕາມທີ່ຈະຍອມຕາຍເພື່ອຄົນອື່ນນັ້ນບໍ່ແມ່ນວິທີທາງດຽວທີ່ເຮົາຈະສະແດງເຖິງຄວາມຮັກ.

ທາງທີ່ເຫັນໄດ້ງ່າຍງກໍຄືຊ່ອຍເຫລືອຜູ້ທຸກຍາກໃນເມື່ອມີໂອກາດ. ຖ້າຄົນນຶ່ງຄົນໃດປະຕິດເສດບໍ່ຍອມຊ່ອຍໃນສະພາບຢ່າງນັ້ນ ກໍເປັນການສົງສັຍວ່າ**ຄວາມຮັກຂອງພຣະເຈົ້າມີຢູ່ໃນຈິດໃຈ**ຂອງຄົນຢ່າງນັ້ນຫລືບໍ່. ນັ້ນໝາຍຄວາມວ່າຄວາມຮັກແທ້ນັ້ນບໍ່ເປັນພຽງແຕ່**ເວົ້າລ້າໆ** -ຄວາມເວົ້າກໍດີຢູ່ ແຕ່ຕ້ອງປະກອບດ້ວຍ**ການກະທໍາ**ອອກມາ (ຢາໂກໂບ 1:22-24). ຄວາມຮັກບໍ່ເປັນພຽງແຕ່ເວົ້າເຖິງການຊ່ອຍຄົນອື່ນຊື່ໆ; ຄວາມຮັກຕ້ອງປະກອບດ້ວຍການກະທໍາໃນເມື່ອຄົນອື່ນມີຄວາມ ຕ້ອງການ. **ສິ່ງນັ້ນນັ້ນເປັນສິ່ງທີ່ບອກພວກເຮົາເຖິງຄວາມຈິງ.**

ຄວາມຮັກຈະໄດ້ເຫັນແຈ້ງອອກມາ ໃນເມື່ອເຮົາຍອມສະລະເວລາອອກໄປຢ້ຽມຢາມຄົນເຈັບໄຂ້ໄດ້ພະຍາດ, ຊ່ອຍເງິນຜູ້ຂາດເຂີນ, ຫລືປອບໃຈຄົນທຸກໂສກເພາະຄົນຮັກຕາຍຈາກໄປ. ໃນເມື່ອພວກເຮົາໄດ້ເຮັດສິ່ງເຫລົ່ານີ້ແລ້ວພວກເຮົາກໍບໍ່ມີຈິດໃຈຢ້ານກົວທີ່ຈະປາກົດຕົວຕໍ່**ພຣະພັກຂອງພຣະເຈົ້າ** ເພາະພຣະເຈົ້າກໍ**ຍິ່ງໃຫຍ່ກວ່າຈິດໃຈຂອງພວກເຮົາ.** ພຣະອົງຊົງຮູ້ຈັກການກະທໍາຂອງເຮົາຊຶ່ງເປັນຫລັກຖານເຖິງຄວາມສັທພັນກັບພຣະອົງ. ຫລາຍເທື່ອພວກເຮົາມັກລົງ**ໂທດຕົວເອງ** ແຕ່ພຣະເຈົ້າຈະບໍ່ລົງໂທດພວກເຮົາເພາະພຣະອົງໄດ້**ຊົງຮູ້ຈັກການກະທໍາຂອງຂອງເຮົາໃນທຸກໆສິ່ງ.** ຄວາມຮັກ ແລະຄວາມຈິງຂອງພຣະອົງດໍາລົງໃນຊີວິດຂອງພວກເຮົາເພາະອົງພຣະເຢຊູຜູ້ຍອມ**ສະລະພຣະຊົນເພື່ອພວກ ເຮົາທັງຫລາຍ.**

### *ຄວາມວ່າຮັກໃນພາສາກຣີກ*

ໃນສັດຕະວັດທີນຶ່ງ ພວກທີ່ປາກພາສາກຣີກໄດ້ໃຊ້ຄໍາເວົ້າສີ່ຄໍາທີ່ມີຄວາມໝາຍເຖິງເຣື່ອງຂອງຄວາມຮັກ ທີ່ແປເປັນພາສາອັງກິດ "ຮັກ." **ສໂຕເກ**, ທີ່ແມ່ນຄວາມຮັກ ຄວາມແພງໃນຖ້າມກາງຍາດພີ່ນ້ອງ, ລະຫວ່າງພໍ່ແມ່ແລະລູກ. **ເອໂຣດ** ໝາຍເຖິງຄວາມຮັກແບບເພດສໍາພັນ. **ຟີລີອາ** ເປັນຄວາມຮັກລະຫວ່າງຄອບຄົວ ເພື່ອນຝູງ. **ອາກາເປ** ເປັນຄວາມເວົ້າທີ່ໃຊ້ຫລາຍໃນພຣະຄັທພີໃໝ່. ມັນເປັນຄວາມຮັກທີ່ບໍ່ມີຂອບເຂດ ເປັນຄວາມຮັກຂອງພຣະເຈົ້າຕໍ່ມະນຸດ. ນີ້ເປັນຄວາມຮັກທີ່ຜູ້ທີ່ເຊື່ອຄວນມີຕໍ່ກັນແລະກັນ.

## 3. <u>ຄວາມຮັກຂອງພຣະເຈົ້າທໍາລາຍຄວາມຢ້ານກົວ</u> (1 ໂຢຮັນ 4:15-18)

ໂຢຮັນໄດ້ກ່າວວ່າຄວາມສໍາພັນຂອງຜູ້ທີ່ເຊື່ອກັບພຣະເຈົ້າຜ່ານທາງພຣະເຢຊູນັ້ນເລິກຫລາຍຈົນເປັນເຫດໃຫ້**ພຣະເຈົ້າສະຖິດຢູ່ນໍາ ແລະຄົນນັ້ນກໍຢູ່ນໍາພຣະເຈົ້າເໝືອນກັນ** (ໂຢຮັນ 15:4-7), ແຕ່ຄວາມສັມພັນຢ່າງນີ້ຈະບໍ່ມີຂຶ້ນໃນເມື່ອຄົນນັ້ນບໍ່ໄດ້**ສາລະພາບວ່າພຣະເຢຊູເປັນພຣະບຸ**ດຂອງພຣະເຈົ້າ. ບໍ່ມີຜູ້ໃດຮູ້ຈັກພຣະເຈົ້າໄດ້ໃນເມື່ອເຂົາປະຕິດເສດຄວາມເປັນພຣະເຈົ້າ, ເວລາພຣະເຢຊູປະທານການບັງເກີໃໝ່ໃຫ້ (1 ໂຢຮັນ 5:1). ຄວາມສັມພັນຢ່າງນີ້ເຮັດໃຫ້ພວກເຮົາ**ຮູ້ ຈັກແລະເຊື່ອວ່າພຣະເຈົ້າໄດ້ຮັກພວກເຮົາ** ແລະຮູ້ແນ່ນອນວ່າ ຄວາມຮັກຂອງພຣະອົງຍັງຄົງຢູ່ກັບພວກເຮົາສເມີ. **ພຣະເຈົ້າ ຊົງເປັນຄວາມຮັກ**ນັ້ນໝາຍຄວາມວ່າ ຄວາມຮັກເປັນສະພາບນຶ່ງຂອງພຣະເຈົ້າ, ຄືວ່າຄວາມຮັກນັ້ນເປັນທັມມະຊາດຂອງ ພຣະອົງ. (1 ໂຢຮັນ 4:7-8).

ພວກເຮົາຕ້ອງລະວັງທາງກົງກັນຂ້າມ ຢ່າເຂົ້າໃຈວ່າ-ຄວາມຮັກເປັນພຣະເຈົ້າ. ໃນເວລາດຽວກັນ, ພຣະເຈົ້າຊົງເປັນຄວາມຮັກ ນັ້ນບໍ່ໝາຍເຖິງວ່າພຣະອົງເປັນແຕ່ຢ່າງນັ້ນ. ພຣະອົງຍັງເປັນ "ແສງສະຫວ່າງ" (1 ໂຢຮັນ 1:5). ພຣະອົງເປັນ "ວິນຍານ" (ໂຢຮັນ 4:24), ພຣະອົງ "ເປັນໄຟທີ່ເຜົາຜານ" (ເຮັບເຣີ 12:29). ແຕ່ຄວາມຮັກຂອງພຣະເຈົ້າເປັນສິ່ງປະເສີດເປັນແຜນການໃຫ້ພຣະອົງໄດ້ໄຖ່ພວກເຮົາ. ຄວາມຮັກຢ່າງນັ້ນເຮັດໃຫ້ລູກຂອງພຣະເຈົ້າມີຄວາມ**ໝັ້ນໃຈໃນວັນພິພາກສາ** ແລະ**ຂັບໄລ່ຄວາມຢ້ານອອກໄປ.** ຄວາມຮັກຢ່າງນີ້ໃຫ້ພະລັງແກ່ພວກເຮົາ ບໍ່ໃຫ້ມີຄວາມຢ້ານທີ່ຈະອອກໄປປະກາດກັບຄົນອື່ນໃນຄຣິສຕະຈັກ.

ຄົນທີ່ເຊື່ອໃນອົງພຣະເຢຊູກໍເປັນບຸດຂອງພຣະເຈົ້າ, ພຣະເມຊີອາ, ແລະພຣະອົງເຈົ້າ. ພວກເຂົາບໍ່ຄວນມີຄວາມຢ້ານກົວໃນ**ວັນພິພາກສາເລີຍ.** ໃນເວລານັ້ນພວກເຮົາຫວັງອັນໃດ? **-ບໍ່ແມ່ນການລົງໂທດ,** ແຕ່ແມ່ນຄວາມຮັກຂອງພຣະ

ອົງ ສະຖິດຢູ່ກັບພວກເຮົາ.    ໃນເມື່ອພວກເຮົາມີ**ຄວາມໝັ້ນ**ໃຈຢ່າງນີ້ ພວກເຮົາສາມາດສະແດງເຖິງຄວາມຮັກນັ້ນຕໍ່ຄົນອື່ນໆ ໂດຍບໍ່ຢ້ານເລີຍ.  ພວກເຮົາຮູ້ວ່າພຣະເຈົ້າຮັກເຮົາ ແລະປະທານຄວາມກ້າຫານໃຫ້ເພື່ອຈະເຮັດທຸກສິ່ງດ້ວຍຄວາມຮັກ.  **ເຖິງແມ່ນວ່າຄວາມຮັກຂອງພຣະເຈົ້າປະເສີດສຸດໃນພວກເຮົາ,** ແຕ່ໃນຊີວິດຂອງເຮົາແລ້ວ ພວກເຮົາຈະບໍ່ບັນລຸເຖິງຂັ້ນ ປະເສີດຫລືຄົບຮ້ອຍເປີເຊັນໃນດ້ານຈິດວິນຍານ.

### 4. <u>ຄວາມຮັກຂອງພຣະເຈົ້ານຳທ່ານໄປສູ່ຄວາມເຊື່ອຟັງ</u> (1 ໂຢຮັນ 5:2-5)

ຄຳເວົ້າຂອງໂຢຮັນໃນຕອນນີ້ໄດ້ຫວນຄືນຫລັງເຖິງຕອນສຸດທ້າຍຂອງບົດທີສີ່.  ບອກວ່າບໍ່ມີຄົນໃດອ້າງວ່າຮັກພຣະເຈົ້າ ແລະຍັງກຽດຊັງອ້າຍນ້ອງຂອງຕົນ (4:20-21) **ການທີ່ຮັກລູກຂອງພຣະເຈົ້າ**ເປັນຜົນບອກວ່າເຮົາ **ໄດ້ຮັກຕໍ່ພຣະເຈົ້າແລະເຊື່ອຟັງຄຳສັ່ງຂອງພຣະອົງ.**  ນີ້ເປັນຕົວຢ່າງອັນນຶ່ງທີ່ໂຢຮັນໄດ້ຍິນຄຳສອນຂອງອັກຄະສາວົກສັ່ງສອນ ແລະພວກເຂົາກໍໄດ້ຍິນອົງພຣະເຢຊູກ່າວສອນ:    "ຖ້າທ່ານທັງຫລາຍຮັກເຮົາ ທ່ານກໍຈະຖືຮັກສາບັດຍັດຂອງເຮົາ." (ໂຢຮັນ 14:15).    ນີ້ໄດ້ບອກເຖິງການເປັນພຣະເຈົ້າຂອງອົງພຣະຄຣິດ ເພາະຄຳສັ່ງຂອງພຣະເຈົ້າກໍບໍ່ໄດ້ແຕກຕ່າງຫຍັງກັບຄຳສັ່ງສອນຂອງພຣະເຢ ຊູເພື່ອຈະເກັບເອົາເຣື່ອງດຽວກັນໃນຕອນນີ້ໃນ 1 ໂຢຮັນ, ໂຢຮັນໄດ້ຍົກເອົາຄຳສັ່ງຂອງພຣະເຈົ້າມາຕິດຕໍ່ກັບຄວາມຮັກຂອງພຣະເຈົ້າ.     ຕາມທັມມະຊາດ**ຄວາມຮັກຂອງເຮົາ**ຕໍ່ພຣະເຈົ້າຄືໃຫ້ເຮົາ**ຮັກສາຄຳສັ່ງຂອງພຣະອົງ.**  ຄຳສັ່ງເຫລົ່ານີ້ກໍບໍ່ເປັນ **ພາຣະໜັກອັນໃດ,**  ແຕ່ເປັນເສຣີພາບເພາະມັນຊ່ອຍເຮົາໃຫ້ມີຊີວິດຢູ່ເຕັມລົ້ນເໝືອນເປັນໄພ່ພົນຂອງພຣະເຈົ້າ.

ຂໍ້ 4-5 ເປັນຂໍ້ທີ່ເວົ້າເຖິງໄຊຊນະໃນຊີວິດຂອງຄຣິສຕຽນ, ເພາະພວກເຂົາໄດ້ຊະນະໂລກຍ້ອນເຂົາໄດ້ບັງເກີດໃໝ່ຈາກພຣະເຈົ້າ ແລະເຊື່ອວ່າອົງພຣະເຢຊູເປັນພຣະບຸດຂອງພຣະເຈົ້າ.    ການທີ່ຄຣິສຕຽນມີຊັຍນັ້ນຍ້ອນພຣະເຈົ້າໂດຍທາງພຣະເຢຊູຄຣິດ (ໂຢຮັນ 15:5) ການເຊື່ອຟັງຄຳສັ່ງສອນຂອງພຣະເຈົ້າຄືມີຊີວິດຢູ່ຢ່າງຜູ້ມີຊັຍ.

## ບົດຮຽນໃນຊີວິດ

ພຣະເຈົ້າຊົງຮັກທຸກໆຄົນນັ້ນເປັນລັກສະນະຂອງພຣະອົງ, ແລະພຣະອົງມີພຣະດຳຣັດໃຫ້ທຸກໆຄົນທີ່ຮູ້ຈັກກັບພຣະອົງດ້ວຍຄວາມເຊື່ອ ໃຫ້ສະແດງຄວາມຮັກຕໍ່ຄົນອື່ນຢ່າງເສັຽສະລະ.    ນີ້ເປັນຂໍ້ແນະນຳໃຫ້ໃຊ້ປະຕິບັດໃນຊີ ວິດປະຈຳວັນ ເພື່ອຈະສະແດງຄວາມຮັກຕໍ່ພຣະເຈົ້າ ແລະຄົນອື່ນໆ:

- ຂອບຄຸນກັບພຣະເຈົ້າທີ່ພຣະອົງໄດ້ຮັກທ່ານພຽງພໍທີ່ຈະຍອມສະລະພຣະບຸດອົງດຽວຂອງພຣະອົງເພື່ອທ່ານ ເພື່ອຈະປະທານຄວາມພົ້ນໃຫ້ທ່ານ.
- ຕັ້ງສິນໃຈວ່າຈະແບ່ງປັນຄວາມຮັກຂອງພຣະເຈົ້າຜ່ານທາງພຣະຄຣິດໃຫ້ຄົນອື່ນຮູ້ໂດຍສະເພາະແລ້ວຄົນທີ່ບໍ່ຮູ້ ຈັກກັບພຣະເຈົ້າໄວເທົ່າທີ່ຈະໄວໄດ້.
- ໃຫ້ຄວາມຮັກຂອງພຣະເຈົ້າເຮັດໃຫ້ທ່ານມີຄວາມໝັ້ນໃຈເພື່ອຈະຮັບໃຊ້ ແລະເປັນພະຍານຕໍ່ຄົນອື່ນ, ໂດຍສະເພາະຄົນທີ່ບໍ່ເປັນຕາໜ້າຮັກ.

ອຸປຖັມໂດຍ ລາວຊາວເທິນບັບຕິສສັມພັນ www.lsbf.org.,by BV.